ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ເລກທີ 1356/ຣສສ
ນະຄອນຫຼວງວຽງຈັນ, ວັນທີ 28/04/23

# ແຈ້ງການ

ເຖິງ: ບັນດາ ອົງການຈັດຕັ້ງພາກລັດ, ພະນັກງານ-ລັດຖະກອນ, ຜູ້ໃຊ້ແຮງງານ, ຜູ້ອອກແຮງງານໃນຂົງເຂດພາກວິສາຫະກິດ ແລະ ຜູ້ປະກັນຕົນແບບສະໝັກໃຈ.

ເລື່ອງ: ການຈັດຕັ້ງປະຕິບັດຄໍາແນະນໍາ(ສະບັບປັບປຸງ) ກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການປະກັນສັງຄົມ, ສະບັບເລກທີ 0060/ຣສສ ລົງວັນທີ 11 ມັງກອນ 2023.

- ອີງຕາມ ກົດໝາຍວ່າດ້ວຍການປະກັນສັງຄົມ (ສະບັບປັບປຸງ) ສະບັບເລກທີ 54/ສພຊ, ລົງວັນທີ 27 ມິຖຸນາ 2018;
- ອີງຕາມ ດໍາລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສະບັບເລກທີ 602/ນຍ, ລົງວັນທີ 14 ຕຸລາ 2021;
- ອີງຕາມ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍ ວ່າດ້ວຍການປະກັນສັງຄົມ (ສະບັບປັບປຸງ) ຄືນໃໝ່, ສະບັບເລກທີ 0060/ຣສສ, ລົງວັນທີ 11 ມັງກອນ 2023.

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຂໍຖືເປັນກຽດແຈ້ງມາຍັງບັນດາອົງການຈັດຕັ້ງພາກລັດ, ພະນັກງານ-ລັດຖະກອນ, ຜູ້ໃຊ້ແຮງງານ, ຜູ້ອອກແຮງງານໃນຂົງເຂດພາກວິສາຫະກິດ ແລະ ຜູ້ປະກັນຕົນແບບສະໝັກໃຈ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຊາບວ່າ: ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໄດ້ປັບປຸງຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປະກັນສັງຄົມ, ສະບັບເລກທີ 1206/ຣສສ, ລົງວັນທີ 23 ເມສາ 2019 ເພື່ອໃຫ້ແທດເໝາະກັບຄວາມເປັນຈິງ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍການປະກັນສັງຄົມ ສະບັບເລກທີ 54/ສພຊ, ຊຶ່ງຈະມີຜົນບັງຄັບໃຊ້ຕັ້ງແຕ່ **ວັນທີ 01 ພຶດສະພາ 2023 ເປັນຕົ້ນໄປ.** ສໍາລັບຄໍາແນະນໍາສະບັບປັບປຸງໃໝ່ ເລກທີ 0060/ຣສສ, ລົງວັນທີ 11 ມັງກອນ 2023 ທ່ານສາມາດເຂົ້າມາພົວພັນເອົານໍາພະແນກໂຄສະນາ ແລະ ປະຊາສໍາພັນ ຂອງອົງການປະກັນສັງຄົມແຫ່ງຊາດ ຊຶ່ງຕັ້ງຢູ່ບ້ານທົ່ງສ້າງນາງ, ໂທ 021 241280-81 ແລະ ຢູ່ຫ້ອງການປະກັນສັງຄົມຂັ້ນແຂວງ ໃນໂມງລັດຖະການ ຫລື ສາມາດດາວໂຫລດຈາກເວບໄຊ໌ www.lsso.gov.la.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງບັນດາທ່ານທີ່ກ່ຽວຂ້ອງເພື່ອຊາບ ແລະ ໃຫ້ຄວາມຮ່ວມມືໃນການປະຕິບັດດ້ວຍ.

ຮອງລັດຖະມົນຕີ

ປະເດີມພອນ ສິນທະນີ

สแกนด้วย CamScanner